**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2405 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2023

# ຂໍ້ຕົກລົງ
# ວ່າດ້ວຍເຈົ້າໜ້າທີ່ທະບຽນວິສາຫະກິດ

- ອີງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບ ເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມທະບຽນວິສາຫະກິດ ສະບັບເລກທີ 1866/ກທວ, ລົງວັນທີ 14 ທັນວາ 2023.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວ, ການແຕ່ງຕັ້ງ, ການປົດ, ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອຮັບປະກັນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ມີຈັນຍາບັນ, ຈັນຍາທຳ ແນໃສ່ການປະຕິບັດໜ້າທີ່ໃນວຽກງານບໍລິການທະບຽນວິສາຫະກິດ ໃຫ້ມີຄວາມສະດວກ, ທັນສະໄໝ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຄົບຖ້ວນ ປະກອບສ່ວນເຂົ້າໃນວຽກງານທະບຽນວິສາຫະກິດ ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ, ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ ແມ່ນພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງ ຫຼື ປົດ ການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

ເຈົ້າໜ້າທີ່ທະບຽນວິສາຫະກິດ ມີຄື: ເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ກົມທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ຄະນະຄຸ້ມຄອງເຂດເສດຖະກິດພິເສດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ປະຕິບັດໜ້າທີ່ໃນວຽກງານທະບຽນວິສາຫະກິດ ຢູ່ ສປປ ລາວ.

## ໝວດທີ 2
## ເງື່ອນໄຂ, ການແຕ່ງຕັ້ງ, ການປົດ ແລະ ການສິ້ນສຸດ ການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ

**ມາດຕາ 4 ເງື່ອນໄຂຂອງເຈົ້າໜ້າທີ່ທະບຽນວິສາຫະກິດ**

ເຈົ້າໜ້າທີ່ທະບຽນວິສາຫະກິດ ມີເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານ-ລັດຖະກອນສົມບູນ ຢ່າງໜ້ອຍ ສາມ ປີ;
2. ມີຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດ, ຈັບຍາບັນ-ຈັນຍາທຳ;
3. ມີມະນຸດສຳພັນດີ, ຄວາມຈິງໃຈ ແລະ ສັດຊື່ບໍລິສຸດ ໃນການບໍລິການວຽກງານທະບຽນວິສາຫະກິດ;
4. ມີຄວາມຮູ້ ແລະ ໄດ້ຜ່ານການຝຶກອົບຮົມ ກ່ຽວກັບວຽກງານທະບຽນວິສາຫະກິດ;
5. ບໍ່ເຄີຍຖືກລົງວິໄນໃນການຈັດຕັ້ງປະຕິບັດໜ້າທີ່ຜ່ານມາ.

**ມາດຕາ 5 ການແຕ່ງຕັ້ງ ແລະ ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ**

ການແຕ່ງຕັ້ງ ແລະ ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ມີດັ່ງນີ້:

1. ເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ກົມທະບຽນວິສາຫະກິດ ຖືກແຕ່ງຕັ້ງ ຫຼື ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ໂດຍລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ;
2. ເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ ຫຼື ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ໂດຍຫົວໜ້າພະແນກ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ;
3. ເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຖືກແຕ່ງຕັ້ງ ຫຼື ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ໂດຍຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ;
4. ເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ ຫຼື ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ໂດຍລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 6 ການສິ້ນສຸດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ**

ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສິ້ນສຸດການເປັນພະນັກງານ-ລັດຖະກອນ ຕາມກົດໝາຍ ແລະ ລະບຽບການ;
2. ຖືກປົດ ຫຼື ລາອອກ ຈາກການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ;
3. ເສຍກຳລັງແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
4. ເສຍຊີວິດ.

## ໝວດທີ 3
## ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ**

ເຈົ້າໜ້າທີ່ທະບຽນວິສາຫະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ຄໍາແນະນໍາ ໃນການສ້າງຕັ້ງວິສາຫະກິດ, ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດ ໃຫ້ແກ່ຜູ້ລົງທຶນ ຫຼື ວິສາຫະກິດ;

2. ພິຈາລະນາ ອອກ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ໃນກໍລະນີ ເອກະສານປະກອບ ບໍ່ຖືກຕ້ອງ ແລະ/ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງຕອບປະຕິເສດເປັນລາຍລັກອັກສອນ ໃນການອອກ ຫຼື ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ເພື່ອເປັນບ່ອນອີງໃຫ້ແກ່ຜູ້ຍື່ນຄໍາຮ້ອງ;

3. ເຈົ້າໜ້າທີ່ທະບຽນວິສາຫະກິດ ມີສິດເຊັນ ຕາມການຈັດລຽງບຸລິມະສິດ ຢ່າງໜ້ອຍຕ້ອງມີຈໍານວນສອງ ທ່ານ ຂຶ້ນໄປ;

4. ແຈ້ງໃຫ້ວິສາຫະກິດ ມາປ່ຽນແປງຊື່ວິສາຫະກິດທີ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ ແລະ ຕາມຄໍາຕັດສິນຂອງສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

5. ຄຸ້ມຄອງການຈັດຕັ້ງທຸລະກິດ ຂອງທຸກປະເພດວິສາຫະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ກ່ຽວກັບການສ້າງຕັ້ງວິສາຫະກິດ, ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ, ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ເກັບກໍາ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນ ກ່ຽວກັບວິສາຫະກິດ ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ແກ່ສາທາລະນະຊົນ;

7. ສະໜອງຂໍ້ມູນ ກ່ຽວກັບຫົວໜ່ວຍທຸລະກິດ ໃຫ້ຂະແໜງການກ່ຽວຂ້ອງ ໃນກໍລະນີ ມີຂໍ້ຂັດແຍ່ງ ຫຼື ມີຄະດີກ່ຽວກັບວຽກງານທະບຽນວິສາຫະກິດ;

8. ລຶບລ້າງ ຫຼື ສະເໜີລຶບລ້າງ ໃບທະບຽນວິສາຫະກິດ ຕາມແຕ່ກໍລະນີທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ;

9. ໂຈະການນໍາໃຊ້ໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງສ່ວຍສາອາກອນ;

10. ອອກແຈ້ງການ ກ່ຽວກັບການຍຸບເລີກວິສາຫະກິດ ແລະ ລຶບຊື່ວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ໃນຄວາມຮັບຜິດຊອບຂອງຕົນ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ, ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ໄດ້ຮັບການຝຶກອົບຮົມ ຍົກລະດັບຄວາມຮູ້ຄວາມສາມາດ ຕາມຫຼັກວິຊາການ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການໃນການບໍລິການວຽກງານທະບຽນວິສາຫະກິດ ໃນແຕ່ລະໄລຍະ;

12. ສະເໜີຂັ້ນເທິງພິຈາລະນາ ກ່ຽວກັບການອໍານວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ເປັນຕົ້ນ ງົບປະມານ, ສະຖານທີ່ເຮັດວຽກ, ຍານພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ແລະ ສິ່ງອໍານວຍຄວາມສະດວກອື່ນທີ່ຈໍາເປັນ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 8 ຂໍ້ຫ້າມ**

ຫ້າມ ເຈົ້າໜ້າທີ່ທະບຽນວິສາຫະກິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ແລະ ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ສົມຮູ້ຮ່ວມຄິດ ຫຼື ເອື້ອອຳນວຍຄວາມສະດວກແກ່ຜູ້ລົງທຶນຫຼື ວິສາຫະກິດ ເພື່ອໃຫ້ໄດ້ມາຜົນປະໂຫຍດທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

3. ທວງເອົາ, ຂໍເອົາ ແລະ ຮັບເອົາ ສິນບົນ ຈາກຜູ້ລົງທຶນ ຫຼື ຜູ້ອື່ນ;

4. ກົດໜ່ວງຖ່ວງດຶງ ແລະ ຮຽກເອົາເອກະສານເພີ່ມເຕີມ ໃນການແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ປະຕິເສດ ການແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດໂດຍບໍ່ມີເຫດຜົນ;

6. ແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

7. ປະຕິເສດການເປີດເຜີຍຂໍ້ມູນທະບຽນວິສາຫະກິດ ໃນລະບົບທະບຽນວິສາຫະກິດ ແລະ ຊຸດເອກະສານທະບຽນວິສາຫະກິດ ຢູ່ໃນຫ້ອງການຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດໃຫ້;

8. ຕໍ່ອາຍຸການນຳໃຊ້ໃບທະບຽນວິສາຫະກິດ;

9. ເປັນນາຍໜ້າແລ່ນ ຫຼື ປອມແປງເອກະສານ ແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ການຍຸບເລີກວິສາຫະກິດ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ຕາປະທັບ**

ເຈົ້າໜ້າທີ່ທະບຽນວິສາຫະກິດ ມີຕາປະທັບສະເພາະ ເພື່ອນຳໃຊ້ເຂົ້າໃນວຽກງານທະບຽນວິສາຫະກິດ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ